## ມິຊຊາອາທິດທີ 15 ການົດທຳມະດາປີ A
## ວັນທີ 12 ກໍລະກົດ 2020



**ພຣະວໍລະສານ ໂດຍນັກບຸນມັດທາຍ 13, 1-23**

ໃນເວລານັ້ນ ພຣະເຢຊູເຈົ້າ ສະເດັດອອກຈາກເຮືອນ ມາປະທັບນັ່ງທີ່ແຄມທະເລ. ຝູງຄົນເປັນອັນມາກ ພາກັນມາຫ້ອມລ້ອມພຣະອົງ. ຈົນພຣະອົງຈຳເປັນຕ້ອງລົງປະທັບນັ່ງ ຢູ່ເຮືອລຳໜຶ່ງ. ສ່ວນຝູງຄົນ ກໍຈຸ້ມກັນຢູ່ຕາມເທິງຝັ່ງ. ແລ້ວພຣະອົງກໍໄດ້ກ່າວແກ່ພວກເຂົາ ຫລາຍເລື່ອງ ເປັນຄວາມປຽບທຽບວ່າ: "ນີ້ແຫລະ ຜູ້ຫວ່ານໄດ້ອອກໄປຫວ່ານເຂົ້າ. ເວລາທີ່ລາວຫວ່ານຢູ່ນັ້ນ, ເຂົ້າບາງ ເມັດຕົກລົງຕາມ ແຄມທາງ ແລະໝູ່ນົກກໍມາຕອດກິນໝົດ. ບາງເມັດຕົກຢູ່ເທິງພະລານຫີນ ບ່ອນມີດິນແຕ່ເລັກນ້ອຍ ແລະມັນກໍງອກຂຶ້ນທັນທີ ຍ້ອນດິນບໍ່ເລິກ. ແຕ່ພໍເມື່ອຕາເວັນຂຶ້ນແລ້ວ ແດດກໍເຜົາມັນ, ແລະມັນກໍຫ່ຽວແຫ້ງໄປ ດ້ວຍວ່າຂາດຮາກ. ບາງເມັດຕົກລົງໃນພຸ່ມໜາມ ແລະໜາມກໍຂຶ້ນ ຫງຳເຂົ້າໃຫ້ຕາຍ. ບາງເມັດຕົກໃສ່ດິນດີ, ຈຶ່ງໃຫ້ໝາກຜົນເຖິງຮ້ອຍເທົ່າ, ຫົກສິບເທົ່າ, ສາມສິບເທົ່າ. ໃຜມີຫູຟັງກໍໃຫ້ຟັງເອົາ."

ພວກສາວົກ ເຂົ້າມາທູນພຣະເຢຊູເຈົ້າວ່າ: "ເປັນຫຍັງ ພຣະອົງຈຶ່ງກ່າວເປັນ ຄວາມປຽບທຽບ ແກ່ພວກເຂົາ?" ພຣະເຢຊູເຈົ້າຕອບພວກສາວົກວ່າ: "ຍ້ອນວ່າ ສຳລັບພວກເຈົ້າ ພວກເຈົ້າໄດ້ຮັບພຣະຄຸນ ໃຫ້ຮູ້ເຖິງຂໍ້ເລິກລັບ ແຫ່ງອານາຈັກສະຫວັນ; ສ່ວນພວກຄົນອື່ນນັ້ນ ເຂົາບໍ່ໄດ້ຮັບເລີຍ". ດ້ວຍວ່າ ຜູ້ທີ່ມີແລ້ວຈະໄດ້ຮັບຕື່ມອີກ, ແລະຈະມີຢ່າງອຸດົມສົມບູນ; ແຕ່ສ່ວນຜູ້ທີ່ບໍ່ມີນັ້ນ, ແມ່ນວ່າ ອັນທີ່ມີແລ້ວກໍຈະຖືກຖອນອອກ. ດ້ວຍເຫດນີ້, ເຮົາຈຶ່ງກ່າວແກ່ພວກເຂົາ ໂດຍທາງຄວາມປຽບທຽບ; ຍ້ອນວ່າ ພວກເຂົາເບິ່ງແຕ່ບໍ່ເຫັນ, ພວກເຂົາຟັງ ແຕ່ບໍ່ໄດ້ຍິນ ແລະບໍ່ເຂົ້າໃຈ. ຄົນພວກນີ້ ຖືກຕ້ອງກັບຄຳທຳນາຍ ຂອງທ່ານປະພາສົກອີຊາຢາທີ່ກ່າວວ່າ: "ພວກເຈົ້າຈະຟັງລ້າໆ ແຕ່ຈະບໍ່ເຂົ້າໃຈ; ພວກເຈົ້າຈະເບິ່ງລ້າໆ ແຕ່ຈະບໍ່ເຫັນດອກ. ຍ້ອນວ່າຈິດໃຈຂອງຄົນພວກນີ້ ປຶກໜາໄປແລ້ວ: ພວກເຂົາໄດ້ອັດຫູແລະຫລັບຕາໄວ້, ຢ້ານວ່າຕາພວກເຂົາຈະເຫັນ, ຫູພວກເຂົາຈະຍິນ, ຢ້ານວ່າ ຈິດໃຈຂອງພວກເຂົາຈະເຂົ້າໃຈ, ແລະພວກເຂົາຈະໄດ້ກັບໃຈ, ທັງຢ້ານວ່າ ເຮົາຈະໄດ້ປິ່ນປົວພວກເຂົາ ໃຫ້ດີດ້ວຍ." ສ່ວນພວກເຈົ້າ, ບຸນລາບແກ່ຕາພວກເຈົ້າທີ່ເຫັນ, ບຸນລາບແກ່ຫູພວກເຈົ້າ ທີ່ຍິນ ເຮົາກ່າວແກ່ພວກເຈົ້າເປັນຄວາມຈິງວ່າ: ປະພາສົກ ແລະຜູ້ຊອບທຳຫລາຍຄົນປາດຖະໜາຢາກເຫັນສິ່ງທີ່ພວກເຈົ້າໄດ້ເຫັນ, ແຕ່ກໍບໍ່ໄດ້ເຫັນ, ປາດຖະໜາຍິນສິ່ງທີ່ພວກເຈົ້າໄດ້ຍິນ ແຕ່ກໍບໍ່ໄດ້ຍິນເລີຍ.

"ດັ່ງນີ້ ພວກເຈົ້າຈົ່ງຟັງຄວາມປຽບທຽບ ເລື່ອງຜູ້ຫວ່ານເຂົ້າ: ຜູ້ໃດຟັງໂອວາດ ເລື່ອງອານາຈັກສະຫວັນ ໂດຍບໍ່ເຂົ້າໃຈ, ມານຮ້າຍກໍມາຫລົກຖອນ ເອົາອັນທີ່ຫວ່ານລົງ ໃນໃຈເຂົານັ້ນ: ນີ້ແມ່ນ ຜູ້ທີ່ຮັບເອົາເມັດເຂົ້າ ທີ່ຕົກລົງຕາມແຄມທາງ. ເມັດທີ່ຕົກລົງຕາມພະລານຫີນ ຄືຜູ້ໄດ້ຟັງພະວາຈາ ແລ້ວກໍຮັບໄວ້ທັນທີດ້ວຍຄວາມຍິນດີ. ແຕ່ຍ້ອນຕົວເອງບໍ່ມີຮາກ ຈຶ່ງບໍ່ຖາວອນໄດ້: ພໍແຕ່ຖືກຄວາມລຳບາກ ຫລືການບຽດບຽນ ຍ້ອນພຣະວາຈານັ້ນ ເຂົາກໍພະລາດລົ້ມທັນທີ. ເມັດທີ່ຕົກໃນພຸ່ມໜາມ ຄືຜູ້ທີ່ໄດ້ຟັງພຣະວາຈາ, ແຕ່ຄວາມກັງວົນຝ່າຍໂລກ ແລະຄວາມຜູກພັນ ກັບຊັບສົມບັດມາຫງຳ. ພຣະວາຈານັ້ນ ຈຶ່ງເກີດຜົນບໍ່ໄດ້. ເມັດທີ່ຕົກໃສ່ດິນດີ ຄືຜູ້ທີ່ໄດ້ຟັງພຣະວາຈາ ແລະເຂົ້າໃຈ, ຈຶ່ງເກີດໝາກຜົນເຖິງຮ້ອຍເທົ່າ, ຫົກສິບເທົ່າ, ສາມສິບເທົ່າ".

ນີ້ແມ່ນວາຈາຂອງພະຄຣິສໂຕເຈົ້າ

**ບົດແບ່ງປັນ: ມທ 13, 1-23**

ວັນນີ້ພຣະເຢຊູເຈົ້າໃຊ້ຄວາມປຽບທຽບເລື່ອງຜູ້ຫວ່ານເພື່ອໄຂສຳແດງເລື່ອງອານາຈັກສະຫວັນໃຫ້ພວກລູກສິດແລະຝູງຊົນທີ່ຕິດຕາມພຣະອົງໄປ. ນັກບຸນມັດເທວໄດ້ເນັ້ນໃຫ້ພວກເຮົາຮູ້ວ່າ ພຣະເຢຊູເຈົ້າໄດ້ກ່າວຫລາຍເລື່ອງເປັນຄວາມປຽບທຽບໃຫ້ພວກເຂົາຟັງ. ຄວາມປຽບທຽບແມ່ນຫຍັງ? ຄວາມປຽບທຽບແມ່ນການໃຊ້ເລື່ອງຈິງທີ່ພວກເຮົາສາມາດເຫັນແລະສຳພັດໄດ້ເພື່ອຈະເຂົ້າໃຈເລື່ອງຈິງທີ່ພວກເຮົາບໍ່ເຫັນແລະສຳພັດບໍ່ໄດ້ (ມທ 13, 35). ເປັນຫຍັງພຣະເຢຊູເຈົ້າຈຶ່ງໃຊ້ແຕ່ຄວາມປຽບທຽບ? ເພາະທຸກຄົນໃນທຸກລະດັບສາມາດເຂົ້າໃຈໄດ້. ເຖິງປານນັ້ນກໍດີ, ເມື່ອພວກລູກສິດຖາມພຣະເຢຊູເຈົ້າເປັນຫຍັງພຣະອົງຈຶ່ງກ່າວຄວາມປຽບທຽບກັບຝູງຊົນ? ພຣະອົງກ່າວຕອບພວກເຂົາວ່າ: ສຳລັບພວກເຈົ້າ, ພວກເຈົ້າໄດ້ຮັບພຣະຄຸນໃຫ້ຮູ້ເຖິງຂໍ້ເລິກລັບແຫ່ງອານາຈັກສະຫວັນ. ສ່ວນຝູງຊົນນັ້ນ ເຂົາບໍ່ໄດ້ຮັບເລີຍ. ຍ້ອນພວກເຂົາເບິ່ງແຕ່ບໍ່ເຫັນ, ພວກເຂົາຟັງແຕ່ບໍ່ໄດ້ຍິນແລະບໍ່ເຂົ້າໃຈ. ເມື່ອພວກເຂົາບໍ່ຢາກເຫັນ, ບໍ່ຢາກຟັງ, ບໍ່ຢາກເຂົ້າໃຈໝາຍວ່າພວກເຂົາປິດດວງໃຈແລະສະຕິປັນຍາຂອງພວກເຂົາໄວ້. ຫລືເວົ້າອີກຢ່າງພວກເຂົາມີຈິດໃຈແຂງກະດ້າງນັ້ນເອງ. ຈິດໃຈແຂງກະດ້າງນີ້ປຽບເໝືອນດິນຢູ່ແຄມທາງ, ດິນຢູ່ເທິງພະລານຫີນ ຫລືພຸ່ມໜາມທີ່ທຳໃຫ້ເມັດພືດແຫ່ງອານາຈັກສະຫວັນບໍ່ສາມາດຢັ່ງຮາກລົງເລິກແລະເຕີບໃຫຍ່ຂຶ້ນໄດ້ໃນຕົວພວກເຮົາ.ກົງກັນຂ້າມ,ຖ້າເມັດພືດແຫ່ງອານາຈັກສະຫວັນຫາກຕົກໃສ່ດິນດີກໍຈະໃຫ້ໝາກຜົນເຖິງຮ້ອຍເທົ່າ, ຫົກສິບເທົ່າ, ສາມສິບເທົ່າ. ດິນດີໃນທີ່ນີ້ແມ່ນດິນແນວໃດ? ດິນດີແມ່ນປຽບເໝືອນຄົນທີ່ຟັງວາຈາແຫ່ງອານາຈັກສະຫວັນແລະເຂົ້າໃຈ ຈຶ່ງຈະໄດ້ຮັບໝາກຜົນເຖິງຮ້ອຍເທົ່າ, ຫົກສິບເທົ່າ, ສາມສິບເທົ່າ.

**ພາວະນາ**

ຄວາມປຽບທຽບເລື່ອງອານາຈັກສະຫວັນທີ່ພຣະເຢຊູເຈົ້າກ່າວກັບພວກລູກສິດແລະຝູງຊົນນັ້ນ, ວັນນີ້ພຣະອົງກໍກ່າວກັບພວກເຮົາເຊັ່ນດຽວກັນ. ພວກເຮົາໄດ້ເປີດໃຈເພື່ອຮັບຟັງວາຈາຂອງພຣະອົງບໍ? ພວກເຮົາໄດ້ເຂົ້າໃຈສິ່ງທີ່ພຣະອົງຢາກກ່າວກັບພວກເຮົາບໍ? ຫລືດວງໃຈພວກເຮົາຍັງແຂງດ້າງເໝືອນດິນຢູ່ແຄມທາງ, ເໝືອນດິນຢູ່ເທິງພະລານຫີນ ຫລືເໝືອນພຸ່ມໜາມທີ່ຫງໍາວາຈາພຣະເຈົ້າໄວ້ທຳໃຫ້ວາຈານັ້ນບໍ່ສາມາດຢັ່ງຮາກເລິກແລະເກີດໝາກຜົນໃນຊີວິດຂອງພວກເຮົາໄດ້. ຖ້າພວກເຮົາຢາກເປັນດິນດີຕ້ອງເຮັດແນວໃດ? ຖ້າພວກເຮົາຢາກເປັນດິນດີ ພວກເຮົາຕ້ອງເປີດໃຈເພື່ອຮັບເອົາວາຈາຊົງຊີວິດເຂົ້າມາໃນຊີວິດພວກເຮົາ ເພື່ອວາຈານັ້ນຈະໄດ້ສະຖິດຢູ່ໃນພວກເຮົາແລະທຳໃຫ້ຊີວິດພວກເຮົາເກີດໝາກຜົນຕາມທີ່ພຣະເຈົ້າຊົງປາດຖະໜານັ້ນແລ. ອາແມນ

ຄຸນພໍ່ ອົງຕວນ ກຽດຕິສັກ